ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ...402......../ນຍ

ນະຄອນຫຼວງວຽງຈັນ, ວັນທີ.16...11...2007

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍ ການສ້າງຕັ້ງສະຖາບັນປັດສະເຕີລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ ປີ 2003;
- ອີງຕາມ ໃບສະເໜີ ຂອງ ກະຊວງສາທາລະນະສຸກ ສະບັບເລກທີ 350/ກຊສ, ລົງວັນທີ 10 ຕຸລາ 2007;
- ອີງຕາມ ໃບສະເໜີ ຂອງ ທ່ານລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າຄະນະກຳມະການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 115 / ຫປຄ, ລົງວັນທີ 15 ພະຈິກ 2007.

### ນາຍົກລັດຖະມົນຕີ ແຫ່ງ ສ. ປ. ປ. ລາວ

### ອອກດຳລັດ:

ມາດຕາ 1. ຕົກລົງສ້າງຕັ້ງສະຖາບັນປັດສະເຕີລາວທີ່ມີຖານະທຽບເທົ່າກົມ, ສັງກັດຢູ່ໃນໂຄງປະກອບກົງຈັກ ຂອງ ກະຊວງສາທາລະນະສຸກ ເພື່ອປະຕິບັດພາລະບົດບາດຄົ້ນຄວ້າວິທະຍາສາດການແພດ, ກໍ່ສ້າງ-ບຳລຸງ ພະນັກງານ, ຊ່ວຍໜູນວຽກງານການບົ່ງມະຕິ ແລະ ການປິ່ນປົວພະຍາດ.

ມາດຕາ 2. ມອບໃຫ້ ທ່ານລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ກຳນົດລະອຽດກ່ຽວກັບພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງ ສະຖາບັນ ດັ່ງກ່າວ.

ມາດຕາ 3. ດຳລັດສະບັບນີ້ ມີຜົນສັກສິດ ແລະ ບັງຄັບໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສ. ປ. ປ. ລາວ

ບົວສອນ ບຸບຜາວັນ